**ມິຊຊາລະລຶກເຖິງພວກຜູ້ຕາຍ**

**ວັນທີ 2 ພະຈິກ 2019**



**ພຣະວໍລະສານໂດຍນັກບຸນຢວງ 11, 17-27**

ເມື່ອພຣະເຢຊູເຈົ້າສະເດັດມາເຖິງເບທານີ ເຂົາຝັງລາຊາໂຣໄດ້ສີ່ວັນແລ້ວ. ບ້ານເບທານີຢູ່ໄກນະຄອນເຢລູຊາແລມປະມານສາມກິໂລແມັດ. ພວກຢິວຫລາຍຄົນພາກັນມາເຮືອນນາງມາກທາແລະນາງມາຣີອາເພື່ອໄວ້ອາໄລ ຍ້ອນຕ້ອງສູນເສຍນ້ອງຊາຍ.

ເມື່ອນາງມາກທາໄດ້ຊາບຂ່າວວ່າ ພຣະເຢຊູເຈົ້າສະເດັດມານາງກໍແລ່ນອອກໄປຕ້ອນຮັບ ສ່ວນນາງມາຣີອານັ້ນຢູ່ເຮືອນ. ນາງມາກທາທູນພຣະເຢຊູເຈົ້າວ່າ: ພຣະເຢຊູເຈົ້າເອີຍ! ຖ້າວ່າພຣະອົງຢູ່ທີ່ນີ້ເວລານັ້ນນ້ອງຊາຍຂອງຂ້ານ້ອຍຄົງຈະບໍ່ຕາຍ. ແຕ່ຂ້ານ້ອຍຮູ້ຢູ່ດຽວນີ້ ວ່າພຣະອົງວອນຂໍສິ່ງໃດນໍາພຣະເຈົ້າ, ພຣະເຈົ້າກໍຈະປະທານໃຫ້.

ພຣະເຢຊູເຈົ້າກ່າວວ່າ: ນ້ອງຊາຍຂອງເຈົ້າຈະກັບເປັນຄືນມາ. ນາງມາກທາທູນຕອບວ່າ: ຂ້ານ້ອຍຮູ້ດີວ່ານ້ອງຂ້ານ້ອຍຈະກັບເປັນຄືນມາໃນວັນສິ້ນພິພົບ. ພຣະເຢຊູເຈົ້າກ່າວວ່າ: ເຮົາຄືການກັບເປັນຄືນມາແລະແມ່ນຊີວິດ, ໃຜເຊື່ອໃນເຮົາແມ່ນວ່າຕາຍໄປແລ້ວກໍຈະກັບມີຊີວິດອີກ ແລະທຸກຄົນທີ່ມີຊີວິດຢູ່ແລະເຊື່ອໃນເຮົາຈະບໍ່ຕາຍເລີຍຕະຫລອດນິລັນດອນ. ເຈົ້າເຊື່ອຄວາມນີ້ບໍ?

ນາງມາກທາທູນຕອບວ່າ: ໂດຍ, ພຣະອົງເຈົ້າເອີຍ ຂ້ານ້ອຍເຊື່ອວ່າພຣະອົງແມ່ນພຣະກຣິສໂຕພຣະບຸດຂອງພຣະເຈົ້າຜູ້ຊົງຊີວິດແລະໄດ້ສະເດັດມາໃນໂລກນີ້.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ຢງ 11, 17-27**

ວານນີ້, ພວກເຮົາໄດ້ຮ່ວມຍິນດີກັບບັນດານັກບຸນທັງຫລາຍຂອງພຣະເຈົ້າບົນສະຫວັນ. ຍ້ອນພວກເຂົາໄດ້ບັນລຸເຖິງຈຸດໝາຍປາຍທາງແຫ່ງຄວາມເຊື່ອຂອງພວກເຂົາບົນແຜ່ນດິນນີ້, ແລະພວກເຂົາໄດ້ໄປພົບກັບຄວາມສຸກຍອດປາດຖະໜາອັນແມ່ນພຣະເຢຊູກຣິສໂຕ, ພຣະຊຸມພານ້ອຍຜູ້ໄດ້ໄຖ່ກູ້ພວກເຂົາໃນເມືອງສະຫວັນ. ຄວາມຍິນດີນີ້ສະແດງອອກເຖິງຄວາມສຳພັນເປັນໜຶ່ງດຽວກັບພຣະກຣິສຕະຈັກທັງມວນອັນແມ່ນ: ພຣະກຣິສຕະຈັກບົນສະຫວັນ, ບົນແຜ່ນດິນແລະໃນໄຟຊຳລະ. ເພາະສະນັ້ນ, ວັນນີ້ພຣະກຣິສຕະຈັກຈຶ່ງຮຽກເອີ້ນພວກເຮົາໃຫ້ຫັນໄປຫາບັນດາຜູ້ລ່ວງລັບໄປທີ່ເຊື່ອໃນພຣະເຈົ້າ ເປັນຕົ້ນຜູ້ທີ່ຢູ່ໃນໄຟຊຳລະ, ຍ້ອນເຂົາບໍ່ສາມາດຊ່ວຍເຫລືອຕົວເອງໄດ້. ດັ່ງນັ້ນ, ເຂົາຈຶ່ງຕ້ອງການຄວາມຊ່ວຍເຫລືອຈາກພວກເຮົາຜ່ານທາງຄຳພາວະນາແລະຜົນບຸນກຸສົນ ເປັນຕົ້ນແມ່ນທາງມະຫາບູຊາມິຊຊາ.

ວັນລະນຶກເຖິງຜູ້ລ່ວງລັບໄປນີ້ບໍ່ແມ່ນວັນສະຫລອງຄົບຮອບວັນຕາຍຂອງຜູ້ທີ່ໄດ້ຈາກພວກເຮົາໄປໃນປີໜຶ່ງທີ່ຜ່ານມາ. ແລະກໍບໍ່ແມ່ນແຕ່ວັນທີ່ພວກເຮົາຄິດຫາບັນດາຍາດຕິພີ່ນ້ອງທີ່ໄດ້ລ່ວງລັບໄປເທົ່ານັ້ນ, ແຕ່ເປັນວັນທີ່ພຣະກຣິສຕະຈັກສະແດງອອກເຖິງຄວາມສຳພັນເປັນໜຶ່ງດຽວກັບໝົດທຸກຄົນທີ່ເຊື່ອໃນພຣະເຈົ້າທີ່ໄດ້ຈາກໂລກນີ້ໄປ. ໝາຍວ່າທຸກຄົນທີ່ເຊື່ອໃນພຣະເຈົ້າຊຶ່ງພວກເຮົາຮູ້ຈັກຫລືບໍ່ຮູ້ຈັກ, ຊຶ່ງພວກເຮົາຄິດເຖິງຫລືບໍ່ຄິດເຖິງໃນຄຳພາວະນາ ແລະເປັນຕົ້ນບັນດາວິນຍານໃນໄຟຊຳລະທີ່ລໍຖ້າວັນຈະໄດ້ໄປຢູ່ຮ່ວມກັບພຣະເຈົ້າພ້ອມກັບບັນດານັກບຸນທັງຫລາຍໃນສະຫວັນ. ເພາະຄວາມເຊື່ອເປັນຫົນທາງແລະເຄື່ອງຄໍ້າປະກັນສຳລັບພວກເຮົາຜູ້ຍັງມີຊີວິດກໍຄືຜູ້ທີ່ໄດ້ລ່ວງລັບໄປແລ້ວວ່າ ເຖິງວ່າພວກເຮົາຈະຈາກໂລກນີ້ໄປແລ້ວກໍຕາມ ແຕ່ພວກເຮົາຈະມີຊີວິດຮ່ວມກັບພຣະເຈົ້າຂອງພວກເຮົາໃນອານາຈັກຂອງພຣະອົງ. ດັ່ງທີ່ພຣະເຢຊູເຈົ້າໄດ້ກ່າວກັບນາງມາທາຜູ້ເປັນເອື້ອຍຂອງລາຊາໂຣທີ່ໄດ້ລ່ວງລັບໄປແລ້ວວ່າ: " ໃຜເຊື່ອໃນເຮົາແມ່ນວ່າຕາຍໄປແລ້ວກໍຈະກັບມີຊີວິດອີກແລະທຸກຄົນທີ່ມີຊີວິດຢູ່ແລະເຊື່ອໃນເຮົາຈະບໍ່ຕາຍເລີຍຕະຫລອດນິລັນດອນ ".

ອີງເທິງຄຳເວົ້າຂອງພຣະເຢຊູເຈົ້າແລະຄວາມເຊື່ອນີ້, ພວກເຮົາຈຶ່ງເຊື່ອໝັ້ນວ່າ ອາໄສຄຳວິງວອນພາວະນາຂອງພວກເຮົາ ບັນດາຜູ້ຕາຍທີ່ເຊື່ອໃນພຣະເຈົ້ານັ້ນຈະໄດ້ຮັບຄວາມເມດຕາກະລຸນາແລະອະໄພໂທດຈາກພຣະເຈົ້າ. ເມື່ອເຂົາຫລຸດຈາກແນວຜູກມັດຕ່າງໆນາໆແລ້ວ ເຂົາຈະໄດ້ໄປຢູ່ຮ່ວມກັບພຣະອົງພ້ອມກັບບັນດານັກບຸນທັງຫລາຍໃນສະຫວັນ. ສິ່ງນີ້ແລແມ່ນຄວາມເຊື່ອຂອງພວກເຮົາ, ຄວາມເຊື່ອຂອງພຣະກຣິສຕະຈັກຊຶ່ງພວກເຮົາຍຶດຖືແລະປະກາດອອກມາຕະຫລອດຊີວິດກຣິສຕັງຂອງພວກເຮົາວ່າ: ເຊື່ອຄວາມສຳພັນລະຫວ່າງຄົນບຸນ, ເຊື່ອວ່າກາຍຈະກັບເປັນຄືນມາ ແລະເຊື່ອມີຊີວິດນິລັນດອນ.

ວັນນີ້, ພຣະເຢຊູເຈົ້າໄດ້ຖາມນາງມາທາກໍຄືພວກເຮົາແຕ່ລະຄົນທີ່ພາວະນາໃຫ້ບັນດາຜູ້ລ່ວງລັບໄປວ່າ: ເຈົ້າເຊື່ອສິ່ງທີ່ເຈົ້າປະກາດອອກມາບໍ? ເຈົ້າເຊື່ອໃນຄຳເວົ້າຂອງເຮົາບໍ? ແລະພວກເຮົາຈະຕອບພຣະເຢຊູເຈົ້າຢ່າງໃດ? ຄຳຕອບຂອງພວກເຮົາຈະເໝືອນກັບຄຳຕອບຂອງນາງມາທາບໍວ່າ: " ໂດຍ,ພຣະອົງເຈົ້າເອີຍ ຂ້ານ້ອຍເຊື່ອວ່າພຣະອົງແມ່ນພຣະກຣິສໂຕພຣະບຸດຂອງພຣະເຈົ້າຜູ້ຊົງຊີວິດແລະໄດ້ສະເດັດມາໃນໂລກນີ້ ". ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ